FOREST TRENDS

Forest Trends
Information Brief

May
2017

# ຄວາມຈຳເປັນດ້ານລະບຽບການ

## ບົດຮຽນທີ່ຖອດຖອນໄດ້ຈາກການປູກຢາງພາລາເພື່ອສະໜັບສະໜູນການພັດທະນາຊີວິດການເປັນຢູ່ ແລະ ການຖືຄອງທີ່ດິນຂອງປະຊາຊົນ.

**ຂໍ້ມູນໃນບົດຄວາມຫຍໍ້ນີ້ແມ່ນອີງໃສ່ຜົນຂອງການຄົ້ນຄວ້າກ່ຽວກັບລາຄາຢາງພາລາຕົກຕໍ່າພາຍໃນຊ່ວງຫ້າປີຜ່ານມາ ແລະ ສະທ້ອນໃຫ້ເຫັນເຖິງຜົນການຂະຫຍາຍພື້ນທີ່ປູກຢາງພາລາທີ່ໄດ້ລິເລີ່ມຕັ້ງແຕ່ຊຸມປີ 2000.**

ຜົນໄດ້ຮັບຈາກການສຶກສານີ້ແມ່ນເປັນສ່ວນໜຶ່ງຂອງການຄົ້ນຄວ້າຂອງຟໍເຣັດ ເທຣັນ (Forest Trend) ໃນການເຜີຍແຜ່ນິຕິກຳ ແລະ *ຄວາມເປັນຈິງ* ກ່ຽວກັບການນຳໃຊ້ທີ່ດິນໃນຂົງເຂດອະນຸພາກພື້ນແມ່ນ້ຳຂອງ, ເຊິ່ງໄດ້ຮັບການສະໜັບສະໜູນໂດຍໂຄງການຄຸ້ມຄອງທີ່ດິນໃນພາກພື້ນແມ່ນ້ຳຂອງ (MRLG).

## ຂໍ້ຄວາມສຳຄັນ

1. ຄວາມພະຍາຍາມໃນການຜະລິດຢາງພາລາ ຂອງປະຊາຊົນ ຢູ່ພາກເໜືອຂອງລາວໄດ້ພົບຫຼາຍບັນຫາ, ລວມທັງການປ່ອຍສິນເຊື່ອທີ່ບໍ່ດຶງດູດປະຊາຊົນ, ປະຊາຊົນບໍ່ເຂົ້າຮ່ວມສັນຍາການປູກຢາງພາລາກັບບໍລິສັດຜູ້ລົງທຶນ, ການເຮັດສັນຍາບໍ່ຫັດກຸມ ແລະ ການປະຕິບັດສັນຍາບໍ່ເຂັ້ມງວດ, ລາຄາຢາງພາລາມີການເໜັງຕີງ. ໃນຂະນະທີ່ລາຄາຢາງພາລາໃນຕະຫຼາດໂລກຕົກຕໍ່າອາດຈະບໍ່ແມ່ນສິ່ງທີ່ອຳນາດການປົກຄອງທີ່ກ່ຽວຂ້ອງພາຍໃນ ສປປ.ລາວ ແລະ ສປ.ຈີນ ຈະສາມາດຄຸ້ມຄອງໄດ້, ແຕ່ລາຄາຢາງພາລາຕົກຕໍ່າຕັ້ງແຕ່ປີ 2011 ສ່ວນໜຶ່ງແມ່ນເກີດຈາກນະໂຍບາຍ ແລະ ການບໍລິຫານຄຸ້ມຄອງຕ່າງໆທີ່ຍັງບໍ່ທັນມີປະສິດທິຜົນ. ໃນປັດຈຸບັນນີ້, ລາຄາຢາງ ພາລາໄດ້ເພີ່ມຂຶ້ນແດ່ແລ້ວ, ແຕ່ພາກສ່ວນທີ່ກ່ຽວຂ້ອງຍັງບໍ່ທັນມີວິທີແກ້ໄຂ ຕົ້ນເຫດຂອງບັນຫາທີ່ມີສ່ວນກ່ຽວຂ້ອງກັບລາຄາຢາງພາລາຕົກຕໍ່າໃນໄລຍະຜ່ານມາ.

2. ໃນໄລຍະຜ່ານມາການສ້າງລະບຽບການຍັງບໍ່ທັນຫັດກຸມ ແລະ ການຈັດຕັ້ງປະຕິບັດລະບຽບການຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນ ເນື່ອງຈາກການຂາດງົບປະມານ. ລັດຖະບານ ສປ.ຈີນ ໄດ້ສະໜອງທຶນໃຫ້ແກ່ບໍລິສັດຈີນ ເພື່ອມາລົງທຶນຮ່ວມກັບປະຊາຊົນໃນ ສປປ. ລາວ ໃນການປູກຢາງພາລາເພື່ອທົດແທນການປູກຝິ່ນ; ເຊິ່ງການສະໜອງງົບປະມານຂອງລັດໃນຮູບແບບດັ່ງກ່າວ ແມ່ນໄດ້ຊ່ວຍເຮັດໃຫ້ບ້ານຫາດຍາວມີຜົນສະເລັດໃນການປູກຢາງພາລາ ແລະ ບົດຮຽນຂອງຜົນສຳເລັດດັ່ງກ່າວແມ່ນຄວນຈະມີການຂະຫຍາຍໄປຍັງບ້ານອື່ນໆ. ເຖິງຢ່າງໃດກໍຕາມ, ມີຫຼາຍບໍລິສັດລົງທຶນຂອງຈີນໄດ້ເກັບຮັກສາເງິນທຶນທີ່ລັດສະໜອງໃຫ້ນັ້ນໄປນຳໃຊ້ໃນວຽກງານອື່ນໆ ຫຼາຍກວ່າທີ່ຈະເອົາມາລົງທຶນປູກຢາງພາລາ ເພື່ອຊ່ວຍເຫຼືອປະຊາຊົນໃນ ສປປ.ລາວ ໃຫ້ຫຼຸດພົ້ນອອກຈາກຄວາມທຸກຈົນ ແລະ ສາມາດຢູ່ລອດໄດ້ ໃນຊ່ວງເວລາທີ່ລາຄາຢາງພາລາໃນຕະຫຼາດໂລກມີການເໜັງຕີງ.

3. ຂາດຄວາມໂປ່ງໃສດ້ານລາຄາ, ສັນຍາທີ່ບໍ່ຫັດກຸມ ແລະ ການນຳໃຊ້ເງິນອຸດໜູນຈາກລັດເພື່ອລົງທຶນປູກຢາງພາລາ ແມ່ນພົບກັບຄວາມຫຍຸ້ງຍາກໃນການກຳນົດລາຄາຢາງພາລາຢູ່ພາກເໜືອຂອງ ສປປ.ລາວ. ຜົນຂອງການຄົ້ນຄວ້າພວກເຮົາຊີ້ໃຫ້ເຫັນວ່າປະຊາຊົນຜູ້ປູກຢາງພາລາຢູ່ພາກເໜືອຂອງ ສປປ.ລາວ ໄດ້ຂາຍຢາງພາລາໃນລາຄາຕໍ່າ, ເຊິ່ງລາຄາຢາງພາລາໃນ ສປປ.ລາວ ຫຼຸດລົງແມ່ນບໍ່ພຽງແຕ່ເປັນຜົນເນື່ອງມາຈາກຄວາມຕ້ອງການຢາງພາລາໃນຕະຫຼາດໂລກຫຼຸດລົງ, ແຕ່ຍັງເປັນຜົນເນື່ອງມາຈາກການສວຍໃຊ້ໂອກາດຂອງບັນດາບໍລິສັດຈີນ ເຊິ່ງເປັນຜູ້ຜູກຂາດໂກຕາການນຳຢາງພາລາຈາກ ສປປ.ລາວ ເຂົ້າໄປ ສປ.ຈີນ ພຽງຜູ້ດຽວ. ຈາກບັນຫາດັ່ງກ່າວສະແດງໃຫ້ເຫັນວ່າ ມີຄວາມຈຳເປັນຈະຕ້ອງໄດ້ເພີ່ມຄວາມໂປ່ງໃສໃຫ້ແກ່ໂຄງການພັດທະນາຊົນນະບົດ ທີ່ມີການລົງທຶນຂອງລັດໃນອະນາຄົດໂດຍການຮ່ວມມື ລະຫວ່າງລັດຖະບານ (ລັດຖະບານ ສປປ.ລາວ ແລະ ລັດຖະບານ ສປ.ຈີນ).

## ພາກສະເໜີ

ເນື່ອງຈາກເສດຖະກິດໂລກທີ່ຂະຫຍາຍຕົວຢ່າງໄວວາ, ສປ.ຈີນ ມີຄວາມຕ້ອງການຢາງພາລາຫຼາຍແລະ ຜົນສຳເລັດ "ຂອງຜູ້ທີ່ປູກຢາງພາລາກ່ອນໝູ່" ເຊັ່ນບ້ານຫາດຍາວ, ອຳນາດການປົກຄອງທ້ອງຖິ່ນໃນພາກເໜືອຂອງ ສປປ.ລາວ ໄດ້ສະໜັບສະໜູນໃຫ້ປະຊາຊົນປູກຢາງພາລາຢ່າງກວ້າງຂວາງໃນຊ່ວງກາງຊຸມປີ 2000. ເຊິ່ງແຕກຕ່າງຈາກການປູກຢາງພາລາຢູ່ໃນບັນດາແຂວງທາງພາກໃຕ້ຂອງ ສປປ.ລາວ ທີ່ມີບໍລິສັດຈາກ ສສ.ຫວຽດນາມເຂົ້າມາສຳປະທານທີ່ດິນຂອງລັດເພື່ອປູກຢາງພາລາ. ການປູກຢາງພາລາຢູ່ພາກເໜືອຂອງ ສປປ.ລາວ ແມ່ນເຮັດຕາມຮູບແບບການສົ່ງເສີມໃຫ້ປະຊາຊົນປູກເອງ ແລະ ສົ່ງເສີມໃຫ້ປະຊາຊົນເຮັດສັນຍາກັບບໍລິສັດຜູ້ລົງທຶນຈາກ ສປ.ຈີນ ແລະ ບໍລິສັດພາຍໃນ ສປປ.ລາວ.

ຂໍ້ມູນໃນບົດສະຫຼຸບຫຍໍ້ນີ້ແມ່ນອີງໃສ່ຜົນຂອງການຄົ້ນຄວ້າໃນປີ 2015, ເຊິ່ງໄດ້ລວບລວມເອົາບັນດາບົດຮຽນທີ່ຖອດຖອນໄດ້ຈາກປະສົບການໃນການປູກຢາງພາລາ ທີ່ໄດ້ມີການຜັນຂະຫຍາຍຈາກປະສົບການທີ່ມີຜົນສຳເລັດ ໃນການປູກຢາງພາລາຢູ່ບ້ານຫາດຍາວ ໂດຍການສົ່ງເສີມໃຫ້ປະຊາຊົນຢູ່ພາກເໜືອຂອງ ສປປ.ລາວ ປູກຢາງພາລາໃນຮູບແບບການເຮັດສັນຍາກັບບໍລິສັດເອກະຊົນ. ເຖິງແມ່ນວ່າລາຄາຢາງພາລາໃນປີ 2016 ຈະເພີ່ມຂຶ້ນກໍຕາມ, ບົດຮຽນທີ່ນຳມາສະເໜີຂ້າງລຸ່ມນີ້ແມ່ນເປັນບົດຮຽນໂດຍລວມ ແລະ ໄດ້ມີການລະບຸລະອຽດກ່ຽວກັບຄວາມຕ້ອງການໃນການສ້າງກົດລະບຽບທີ່ຫັດກຸ່ມ ແລະ ສ້າງໃຫ້ມີຄວາມໂປ່ງໃສ ໃນກໍລະນີທີ່ບໍລິສັດເອກະຊົນຮ່ວມເຮັດສັນຍາກັບປະຊາຊົນເພື່ອປູກຢາງພາລາ. ສະນັ້ນ, ບົດຮຽນເຫຼົ່ານີ້ ແມ່ນມີປະໂຫຍດຕໍ່ກັບຂະແໜງການທີ່ກ່ຽວຂ້ອງ ແລະ ສາມາດນຳໄປໃຊ້ເຂົ້າໃນການແກ້ໄຂບັນຫາອື່ນໆທີ່ຄ້າຍຄືກັນກັບກໍລະນີການປູກຢາງພາລາຢູ່ພາກເໜືອຂອງ ສປປ.ລາວ.

## ຜົນຂອງການຄົ້ນຄວ້າທີ່ສຳຄັນ

**1. ກ່ອນລາຄາຢາງພາລາຕົກຕ່ຳໃນຊ່ວງປີ 2012-2016, ຂະແໜງການຢາງພາລາຢູ່ພາກເໜືອຂອງສປປ.ລາວ ກໍມີບັນຫາເນື່ອງຈາກປະຊາຊົນທີ່ໄດ້ປູກຢາງພາລາໂດຍການເຮັດສັນຍາກັບບໍລິສັດເອກະຊົນ ໄດ້ຂາຍສວນຢາງພາລາຂອງຕົນເອງໃຫ້ແກ່ບໍລິສັດຜູ້ລົງທຶນ ແລະ ຄອບຄົວທີ່ມີຖານະເສດຖະກິດດີກວ່າ.**

ນະໂຍບາຍໃນການປູກຢາງພາລາຂອງແຂວງ ໄດ້ຍຶດຖືເອົາບົດຮຽນຜົນສຳເລັດໃນການປູກຢາງພາລາຂອງປະຊາຊົນບ້ານຫາດຍາວ (ເປັນບ້ານຂອງເຜົ່າມົ້ງ ທີ່ຕັ້ງຢູ່ໃກ້ກັບເທດສະບານຂອງແຂວງຫຼວງນ້ຳທາ) ເພື່ອສົ່ງເສີມໃຫ້ປະຊາຊົນປູກຢາງພາລາ. ແຕ່ເມື່ອພະນັກງານທີ່ກ່ຽວຂ້ອງໃນສປປ.ລາວ ແລະ ສປ.ຈີນ ແນະນຳຮູບແບບການເຮັດສັນຍາເພື່ອໃຫ້ປະຊາຊົນ ປູກຢາງພາລາຮ່ວມກັບບໍລິສັດຈີນເພື່ອໃຫ້ບໍລິສັດເອກະຊົນຈາກ ສປ.ຈີນ ສະໜອງທຶນໃນການປູກຢາງພາລາແລະຊື້ນ້ຳຢາງຈາກປະຊາຊົນ, ແຕ່ການສະໜັບສະໜູນດັ່ງກ່າວພັດພົບກັບ 3 ບັນຫາຕົ້ນຕໍດັ່ງລຸ່ມນີ້:

***ການປ່ອຍສິນເຊື່ອດອກເບ້ຍສູງ.*** ປະຊາຊົນຮ່ວມເຮັດສັນຍາກັບບໍລິສັດເອກກະຊົນເພື່ອປູກຢາງພາລາ ແມ່ນມີຄວາມແຕກຕ່າງກັບກໍລະນີຂອງບ້ານຫາດຍາວ. ກໍລະນີຂອງບ້ານຫາດຍາວແມ່ນປະຊາຊົນໄດ້ຮັບເງິນກູ້ທີ່ມີການຊ່ວຍເຫຼືອຈາກອຳນາດການປົກຄອງຂັ້ນແຂວງ ເພື່ອໃຊ້ເປັນທຶນສຳລັບການປູກຢາງພາລາ ແລະ ປະຊາຊົນເປັນຜົນຮັບຜົນປະໂຫຍດຈາກສວນຢາງພາລາຂອງເຂົາເຈົ້າທັງໝົດ. ແຕ່ກົງກັນຂ້າມ, ການເຮັດສັນຍາຮ່ວມກັບບໍລິສັດເອກະຊົນຈາກ ສປ.ຈີນ ເພື່ອປູກຢາງພາລາແມ່ນປະຊາຊົນຕ້ອງໄດ້ແບ່ງປັນຜົນປະໂຫຍດໃຫ້ແກ່ບໍລິສັດລົງທຶນ ເຊິ່ງບາງກໍລະນີແມ່ນໄດ້ມີການແບ່ງປັນຜົນໄດ້ຮັບຈາກສວນປູກຢາງພາລາທີ່ເປັນງົດສົດ, ໂດຍທີ່ປະຊາຊົນໄດ້ຮັບປະມານ 50–70 ເປີເຊັນຂອງຜົນຜະລິດຢາງພາລາທັງໝົດທີ່ເຂົາເຈົ້າຜະລິດໄດ້ ແລະ ສ່ວນທີ່ເຫຼືອແມ່ນບໍລິສັດຜູ້ລົງທຶນຈະຫັກເອົາເພື່ອເປັນຄ່າຕອບແທນໃນການລົງທຶນ. ເຖິງຢ່າງໃດກໍຕາມ, ປະຊາຊົນສ່ວນຫຼາຍແມ່ນບໍ່ສົນໃຈເຂົ້າຮ່ວມໃນການເຮັດສັນຍາເພື່ອປູກຢາງພາລາຮ່ວມກັບບໍລິສັດເອກະຊົນ ເນື່ອງຈາກວ່າເຂົາເຈົ້າຮູ້ສຶກວ່າເຂົາເຈົ້າໄດ້ແບ່ງປັນຜົນປະໂຫຍດໃຫ້ແກ່ບໍລິສັດຜູ້ລົງທຶນຫຼາຍໂພດ. ດັ່ງນັ້ນ, ເຖິງແມ່ນວ່າບໍລິສັດເອກະຊົນຈາກ ສປ.ຈີນ ຈະໄດ້ຮັບທຶນສະໜັບສະໜູນຈາກລັດຖະບານ ສປ.ຈີນ ເພື່ອໃຫ້ມາລົງທຶນປູກຢາງພາລາຢູ່ສປປ.ລາວ ເພື່ອທົດແທນການປູກຝິ່ນກໍຕາມ, ໃນເບື້ອງຕົ້ນ, ການມີສ່ວນຮ່ວມ ຂອງປະຊາຊົນໃນການເຮັດສັນຍາສົ່ງເສີມປູກຢາງພາລາໃນຮູບແບບ “2+3” ແມ່ນມີອັດຕາຕ່ຳຫຼາຍ.

***ການເຂົ້າຮ່ວມສັນຍາແບບບັງຄັບ.*** ຍ້ອນວ່າມີຈຳນວນປະຊາຊົນເຂົ້າຮ່ວມການເຮັກສັນຍາໃນຮູບແບບ 2+3 ໜ້ອຍ, ທາງບໍລິສັດຈີນ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ ຈຶ່ງໄດ້ສະເໜີການເຮັດສັນຍາແບບທີ່ສອງຂຶ້ນເຊິ່ງເອີ້ນວ່າສັນຍາການສົ່ງເສີມກະສິກຳໃນຮູບແບບ “1+4”. ການສົ່ງເສີມການປູກຢາງພາລາໃນຮູບແບບ “1+4” ນີ້ ສ່ວນໃຫຍ່ແມ່ນຖືກຈັດຕັ້ງປະຕິບັດຢູ່ໃນບັນດາບ້ານທີ່ຢູ່ໃນເຂດຫ່າງໄກສອກຫຼີກໃນເຂດພູດອຍ ເພື່ອເປັນການສົ່ງເສີມໃຫ້ປະຊາຊົນໄດ້ມີໂອກາດໃນການຮ່ວມມືກັບບໍລິສັດລົງທຶນປູກຢາງພາລາ, ເຊິ່ງຫຼັງຈາກປູກຢາງພາລາແລ້ວກໍໄດ້ມີການແບ່ງປັນຜົນປະໂຫຍດ (ແບ່ງຕົ້ນຢາງພາລາ) ໃຫ້ປະຊາຊົນເລີຍ. ການສົ່ງເສີມການປູກຢາງພາລາໃນຮູບແບບນີ້ແມ່ນເລັ່ງ

ເປົ້າໝາຍໃສ່ປະຊາຊົນຜູ້ທີ່ທຸກຍາກ ທີ່ບໍ່ມີໂອກາດເຂົ້າຮ່ວມການສົ່ງເສີມການປູກຢາງພາລາ ໃນຮູບແບບ "2+3", ເນື່ອງຈາກວ່າການປູກຢາງພາລາແມ່ນຈະຕ້ອງໄດ້ລໍຖ້າເຖິງ 7 ປີ ຈຶ່ງໄດ້ມີຜົນໄດ້ຮັບ (ປາດຢາງໄດ້), ນັບແຕ່ມື້ປູກຢາງພາລາ. ແຕ່ເນື່ອງຈາກວ່າການສົ່ງເສີມການປູກຢາງພາລາໃນຮູບແບບ "1+4" ແມ່ນໄດ້ແບ່ງຕົ້ນຢາງພາລາໃຫ້ປະຊົນໂດຍກົງພາຍຫຼັງທີ່ສຳເລັດການປູກ, ສະນັ້ນ ພາຍຫຼັງທີ່ປະຊາຊຊົນໄດ້ຮັບສ່ວນແບ່ງ (ສວນຢາງພາລາ) ຈາກບໍລິສັດຜູ້ລົງທຶນແລ້ວ, ປະຊາຊົນຈຳນວນໜຶ່ງບໍ່ສາມາດບົວລະບັດຮັກສາສວນຢາງພາລາຂອງຕົນເອງໄດ້ແລະໄດ້ຂາຍສວນຢາງພາລາຂອງຕົນເອງໃຫ້ແກ່ບໍລິສັດຜູ້ລົງທຶນ ແລະ ຄອບຄົວທີ່ມີຖານະເສດຖະກິດດີກວ່າ.

***ການເພີ່ມຂຶ້ນຂອງຜູ້ຖືຄອງສວນຢາງພາລາຂະໜາດໃຫຍ່.*** ປະຊາຊົນຜູ້ທຸກຍາກໄດ້ເລີ່ມຂາຍຕົ້ນຢາງທີ່ເຂົາເຈົ້າໄດ້ຮັບຈາກການແບ່ງປັນຜົນປະໂຫຍດຈາກບໍລິສັດລົງທຶນພາຍໃຕ້ສັນຍາສົ່ງເສີມການປູກຢາງພາລາຮູບແບບ"1+4", ໃນນັ້ນຜູ້ຊື້ສວນຢາງພາລາຈາກປະຊາຊົນສ່ວນຫຼາຍແມ່ນຄົນລາວຜູ້ທີ່ຮັ່ງມີຢູ່ໃນເທດສະບານແຂວງແລະ ເມືອງແລະ ບໍລິສັດສົ່ງເສີມການປູກຢາງພາລາຂອງຈີນ. ເນື່ອງຈາກວ່າການຂາຍສວນຢາງໃນຮູບແບບນີ້ແມ່ນເປັນການຂາຍແບບບໍ່ເປັນທາງການ, ສະນັ້ນ, ຈຳນວນເນື້ອທີ່ ແລະ ທີ່ຕັ້ງຂອງສວນຢາງພາລາທີ່ຖືກຂາຍນັ້ນແມ່ນບໍ່ໄດ້ຖືກບັນທຶກໃນສະຖິຕິຢ່າງເປັນທາງການຢູ່ຂັ້ນເມືອງ ແລະ ຂັ້ນແຂວງ, ແຕ່ພາກສ່ວນທີ່ກ່ຽວກໍເຊື່ອວ່າການຂາຍສວນຢາງພາລາໃນຮູບແບບນີ້ແມ່ນໄດ້ມີຫຼາຍ ດັ່ງທີ່ຜູ້ໃຫ້ຂໍ້ມູນຢູ່ແຂວງອຸດົມໄຊທ່ານໜຶ່ງໄດ້ເວົ້າວ່າ "ການຂາຍສວນຢາງພາລາແມ່ນເປັນເລື່ອງປົກກະຕິຢູ່ແຂວງນີ້. [ຜູ້ຂາຍ] ສ່ວນຫຼາຍແມ່ນຄອບຄົວທຸກຍາກໃນບ້ານຕ່າງໆ, [ຂະນະທີ່] ຜູ້ຊື້ສວນຢາງພາລາສ່ວນຫຼາຍແມ່ນນັກທຸລະກິດຈາກແຂວງ ແລະ ນັກລົງທຶນຈາກ ສປ.ຈີນ".

**2. ເມື່ອລາຄາຢາງພາລາຕົກຕໍ່າ, ເຈົ້າຂອງສວນຢາງພາລາຂະໜາດໃຫຍ່ໄດ້ຢຸດປາດຢາງ, ແຕ່ວ່າໃນຄະນະດຽວກັນນັ້ນປະຊາຊົນຜູ້ປູກຢາງຫຼາຍຄອບຄົວໄດ້ໃຊ້ແຮງງານພາຍໃນຄອບຄົວຂອງຕົນເອງ ສືບຕໍ່ປາດຢາງພາລາ. ອຳນາດການປົກຄອງທີ່ກ່ຽວຂ້ອງໃນລະດັບແຂວງ ໄດ້ພະຍາຍາມຕໍ່ລອງໃຫ້ບໍລິສັດເກັບຊື້ຢາງພາລາ ຂຶ້ນລາຄາຢາງພາລາໃຫ້ປະຊາຊົນ, ແຕ່ວ່າການຕໍ່ລອງດັ່ງກ່າວກໍບໍ່ສາມາດເຮັດໃຫ້ບໍລິສັດຂຶ້ນລາຄາຢາງພາລາໃຫ້ແກ່ປະຊາຊົນໄດ້ ເທົ່າທີ່ຄວນ. ເຊິ່ງໝາຍຄວາມວ່າປະຊາຊົນຜູ້ປູກຢາງພາລາໄດ້ຮັບຜົນກະທົບຈາກລາຄາຢາງພາລາຕົກຕໍ່າ ເນື່ອງຈາກສອງສາເຫດຫຼັກຄື ລາຄາຢາງພາລາໃນຕະຫຼາດໂລກຕົກຕໍ່າ ແລະ ການສວຍໂອກາດຫຼຸດລາຄາຢາງພາລາຂອງບໍລິສັດເກັບຊື້ຢາງພາລາ.**

***ການຮັບມືຂອງປະຊາຊົນຕໍ່ກັບບັນຫາລາຄາຢາງພາລາຕົກຕໍ່າ.*** ປະຊາຊົນໄດ້ມີວິທີການຮັບມືຕໍ່ກັບບັນຫາລາຄາຢາງພາລາຕົກຕໍ່າທີ່ແຕກຕ່າງກັນເຊັ່ນ ປະຊາຊົນຈຳນວນໜຶ່ງ (ຜູ້ທີ່ມີສວນຢາງພາລາໜ້ອຍ) ແມ່ນໄດ້ສືບຕໍ່ປາດຢາງພາລາດ້ວຍແຮງງານພາຍໃນຄອບຄົວແລະ ປະຊາຊົນຜູ້ທີ່ມີສວນຢາງພາຫຼາຍແມ່ນໄດ້ຈ້າງແຮງງານທາງນອກເພື່ອປາດຢາງພາລາໃນສວນຢາງພາລາຂອງຕົນເອງ. ດັ່ງທີ່ປະຊາຊົນຜູ້ໜຶ່ງໄດ້ອະທິບາຍວ່າ "[ລາຄາຢາງພາລາຢູ່ທີ່] 4 ຢວນຕໍ່ກິໂລ, ແມ່ນພວກເຮົາ ຕ້ອງໄດ້ປາດຢາງພາລາດ້ວຍການນຳໃຊ້ແຮງງານທີ່ມີໃນຄອບຄົວຕົນເອງ. ໃນກໍລະນີຄອບຄົວທີ່ມີສວນຢາງຫຼາຍ ແມ່ນເຂົາເຈົ້າພຽງແຕ່ປາດຢາງພາລາໃນສວນຂອງເຂົາເອງສ່ວນໜ້ອຍໜຶ່ງເທົ່ານັ້ນໂດຍອີງໃສ່

ຄວາມສາມາດກຳລັງແຮງງານທີ່ມີພາຍໃນຄອບຄົວຂອງເຂົາເຈົ້າ.” ເຊິ່ງປັດຈຸບັນນີ້ພວກເຮົາບໍ່ສາມາດຮູ້ໄດ້ວ່າຈຳນວນເນື້ອທີ່ສວນຢາງພາລາຢູ່ພາກເໜືອຂອງ ສປປ.ລາວ ທີ່ບໍ່ໄດ້ຖືກປາດມີຫຼາຍປານໃດ, ແຕ່ປະຊາຊົນຜູ້ທີ່ທຸກຍາກຫຼາຍຄອບຄົວ ໄດ້ຂາຍສວນຢາງພາລາໃຫ້ແກ່ຄອບຄົວທີ່ມີຖານະທາງເສດຖະກິດດີກວ່າເປັນຈຳນວນຫຼາຍ. ປະຊາຊົນຜູ້ທີ່ພວກເຮົາສຳພາດໃນປີ 2015 ໄດ້ອະທິບາຍໃຫ້ພວກເຮົາຮູ້ວ່າປະຊາຊົນຜູ້ປູກຢາງພາລາສ່ວນຫຼາຍແມ່ນໄດ້ຢຸດເຊົາປາດຢາງພາລາໃນສວນຢາງຂອງຕົນເອງ ເນື່ອງວ່າລາຄາຢາງພາລາຕົກຕໍ່າ ເຊິ່ງໃນບາງພື້ນທີ່ປະຊາຊົນປາດຢາງພາລາບໍ່ຮອດ 10% ຂອງຈຳນວນເນື້ອທີ່ສວນຢາງພາລາທັງໝົດທີ່ເຂົາເຈົ້າມີຢູ່.

***ລະບຽບການຄ້ຳປະກັນດ້ານລາຄາຍັງມີຈຳກັດ.*** ສັນຍາການລົງທຶນປູກຢາງພາລາທີ່ທາງອຳນາດການປົກຄອງແຂວງໄດ້ເຊັນກັບບໍລິສັດປູກຢາງພາລາຈາກ ສປ.ຈີນ ສ່ວນຫຼາຍແມ່ນໄດ້ກ່າວໄວ້ວ່າ ລາຄາຢາງພາລາທີ່ຜູ້ລົງທຶນຈະຊື້ນຳປະຊາຊົນແມ່ນອີງລາຄາໃນຕະຫຼາດ ເຊິ່ງບໍ່ໄດ້ລະບຸລາຄາທີ່ແນ່ນອນ. ໃນນັ້ນມີພຽງແຕ່ 3 ສັນຍາທີ່ພວກພົບເຫັນວ່າມີລາຄາຄ້ຳປະກັນຕໍ່າສຸດ (ເບິ່ງໃນຂໍ້ຕໍ່ໄປ). ໃນທ້າຍປີ 2012, ອຳນາດການປົກຄອງແຂວງຫຼວງນ້ຳທາໄດ້ສ້າງຕັ້ງຄະນະກຳມະການຄຸ້ມຄອງຢາງພາລາຂຶ້ນ ເພື່ອເປັນການຊ່ວຍຕໍ່ລອງກັບບໍລິສັດຜູ້ຊື້ຢາງພາລາ ໃຫ້ຂຶ້ນລາຄາຢາງພາລາໃຫ້ແກ່ປະຊາຊົນ, ເຊິ່ງຄະນະກຳມະການດັ່ງກ່າວນີ້ ໄດ້ມີການກຳນົດລາຄາຢາງພາລາທີ່ປະຊາຊົນຄວນຈະຂາຍໃຫ້ແກ່ຜູ້ຊື້ຢາງພາລາ, ແຕ່ເຖິງຢ່າງໃດກໍ່ຕາມ ບໍລິສັດເກັບຊື້ຢາງພາລາກໍ່ຍັງສືບຕໍ່ເກັບຊື້ຢາງລານຳປະຊາຊົນໃນລາຄາຕໍ່າ. ເນື່ອງຈາກບໍ່ສາມາດຕົກລົງລາຄາກັນລະຫວ່າງປະຊາຊົນ ແລະ ບໍລິສັດເກັບຊື້ຢາງພາລາ, ສະນັ້ນ ຈຶ່ງເຮັດໃຫ້ຜົນຜະລິດຢາງພາລາ (ຢາງກ້ອນ) ທີ່ປະຊາຊົນປາດຈາກສວນຢາງພາລານັ້ນມີຫຼາຍຂຶ້ນເລື້ອຍໆ (ຄ້າງສາງ). ດັ່ງນັ້ນ ຄະນະກຳມະການຄຸ້ມຄອງຢາງພາລາ ຈຶ່ງໄດ້ຕໍ່ລອງກັບ ບໍລິສັດເກັບຊື້ຢາງພາລາ ເພື່ອຊື້ຢາງພາລາທີ່ປະຊາຊົນປາດແລ້ວນັ້ນໃນລາຄາທີ່ເໝາະສົມ ແລະ ອຳນາດການປົກຄອງຂັ້ນແຂວງໄດ້ຍົກເວັ້ນອາກອນກຳໄລໃຫ້ແກ່ບໍລິສັດເພື່ອໃຫ້ບໍລິສັດສາມາດເກັບຊື້ຢາງພາລານຳປະຊາຊົນໃນລາຄາສູງກວ່າເກົ່າ, ແຕ່ທາງບໍລິສັດເກັບຊື້ຢາງພາລາກໍບໍ່ສາມາດເພີ່ມລາຄາຢາງພາລາໃຫ້ແກ່ປະຊາຊົນໄດ້ຫຼາຍເທົ່າທີ່ຄວນ.

***ບໍ່ມີການປະຕິບັດຕາມລາຄາຄ້ຳປະກັນ.*** ໃນສາມເມືອງເປົ້າໝາຍຂອງການເກັບກຳຂໍ້ມູນເພື່ອການຄົ້ນຄວ້າຄັ້ງນີ້, ພະນັກງານໃນຫ້ອງການທີ່ກ່ຽວຂ້ອງໄດ້ອະທິບາຍໃຫ້ພວກເຮົາຮູ້ວ່າ ລາຄາຄ້ຳປະກັນຕໍ່າສຸດສຳລັບຢາງພາລາ ແມ່ນໄດ້ຂຽນເປັນລາຍລັກອັກສອນໃນບາງສັນຍາການປູກຢາງພາລາຂອງບໍລິສັດປູກຢາງພາລາ, ແຕ່ລາຄາໄດ້ທີ່ກຳນົດໄວ້ນັ້ນພັດບໍ່ໄດ້ຖືກປະຕິບັດ. ເຖິງຢ່າງໃດກໍຕາມ, ເຖິງວ່າພະນັກງານທີ່ກ່ຽວຂ້ອງໄດ້ຮັບປາກວ່າຈະເອົາສຳເນົາສັນຍາດັ່ງກ່າວໃຫ້ທີມງານຄົ້ນຄວ້າພວກເຮົາ, ແຕ່ໃນທີ່ສຸດທີມງານຄົ້ນຄວ້າຂອງພວກເຮົາກໍ່ບໍ່ສາມາດເຂົ້າເຖິງສັນຍາດັ່ງກ່າວໄດ້ ແລະ ບໍ່ມີຫຼັກຖານອ້າງອີງສຳລັບຄຳເວົ້າທີ່ວ່າ “ສັນຍາໄດ້ກຳນົດລາຄາຄ້ຳປະກັນຕໍ່າສຸດສຳລັບຢາງພາລາແຕ່ພັດບໍ່ໄດ້ຖືກບັງຄັບໃຊ້”. ບາງຄັ້ງພະນັກງານຈາກຫ້ອງການທີ່ກ່ຽວຂ້ອງກໍບໍ່ໄດ້ເຫັນຍາສັນຍາການປູກຢາງພາລາ ທີ່ໄດ້ລະບຸລາຄາຄ້ຳປະກັນຕໍ່າສຸດນັ້ນ. ດັ່ງທີ່ຜູ້ຖືກສຳພາດທ່ານໜຶ່ງໄດ້ອະທິບາຍວ່າ ທາງບໍລິສັດປູກຢາງພາລາໄດ້ກຳນົດລາຄາຄ້ຳປະກັນເພື່ອເກັບຊື້ຢາງພາລາຕໍ່າສຸດ ໃນສັນຍາ “ແຕ່ທາງບໍລິສັດກໍບໍ່ສາມາດເກັບຊື້ຢາງພາລາຕາມລາຄາທີ່ໄດ້ກຳນົດໄວ້ໃນສັນຍາໄດ້”. ໃນຄະນະດຽວກັນ, ພະນັກງານລັດທີ່ພວກເຮົາສຳພາດຢູ່ເມືອງອື່ນກໍໄດ້ເວົ້າວ່າ ເຖິງວ່າຈະໄດ້

ມີການກຳນົດລາຄາຄ້ຳປະກັນຕ່ຳສຸດໃນການລົງທຶນປູກຢາງພາລາຂອງບາງບໍລິສັດ "ແຕ່ລາຄາຢາງພາລາຢູ່ໃນແຂວງ ແລະ ເມືອງຂອງພວກເຮົາແມ່ນອີງໃສ່ບໍລິສັດຜູ້ເກັບຊື້ຢາງພາລາເປັນຜູ້ກຳນົດ".

***ການສ້າງຕັ້ງກຸ່ມສາຫະກອນຢາງພາລາກໍສາມາດຊ່ວຍໃຫ້ປະຊາຊົນໄດ້ລາຄາແພງຂຶ້ນພຽງເລັກນ້ອຍ.*** ປັດຈຸບັນນີ້ປະຊາຊົນໄດ້ສ້າງກຸ່ມສາຫະກອນຂຶ້ນ, ເຊິ່ງກຸ່ມສາຫະກອນທີ່ເຫັນໄດ້ຊັດເຈນແມ່ນກຸມສາຫະກອນຢາງພາລາຢູ່ບ້ານຫາດຍາວແລະ ກຸ່ມສາຫະກອນຢາງພາລາຢູ່ບ້ານອື່ນໆ, ແຕ່ໃນປັດຈຸບັນນີ້ການສ້າງກຸ່ມສາຫະກອນກໍບໍ່ມີປະສິດທິຜົນທີ່ຈະສາມາດຕໍ່ລອງກັບບໍລິສັດຜູ້ຊື້ຢາງພາລາເພື່ອໃຫ້ໄດ້ລາຄາຢາງພາລາດີຂຶ້ນກວ່າເກົ່າເທົ່າທີ່ຄວນ:

- ຄວາມາສາມາດໃນການຕໍ່ລອງລາຄາຢາງພາລາເພີ່ມຂຶ້ນ: ການສ້າງກຸ່ມສາຫະກອນຢາງພາລາສາມາດຕໍ່ລອງກັບຜູ້ຊື້ຢາງພາລາແລະ ປະຊາຊົນສາມາດໄດ້ລາຄາເພີ່ມຂຶ້ນຈາກເດີມພຽງແຕ່ປະມານ 1 ຢອນຕໍ່ກິໂລ; ຈາກຂໍ້ມູນດັ່ງກ່າວນີ້ສະແດງໃຫ້ເຫັນວ່າ ການສ້າງກຸ່ມສາຫະກອນພຽງຢ່າງດຽວ ບໍ່ສາມາດປ່ຽນແປງລາຄາຢາງພາລາໄດ້, ແຕ່ການປ່ຽນແປງຂອງລາຄາຢາງພາລາ ແມ່ນໄດ້ຮັບຜົນກະທົບຈາກລາຄາຢາງພາລາໃນຕະຫຼາດໂລກມີການເໜັງຕີງໃນຊ່ວງ ສອງ-ສາມ ປີທີ່ຜ່ານມາ.
- ຄວາມຈຳກັດດ້ານຄວາມສາມາດ ໃນການຕໍ່ລອງລາຄາຢາງພາລາ ເຮັດໃຫ້ປະຊາຊົນສົນໃຈເຂົ້າຮ່ວມກຸ່ມສາຫະກອນຢາງພາລາໜ້ອຍ. ເນື່ອງຈາກວ່າລາຄາລາຍາງພາລາຕົກຕ່ຳ ແລະ ປະຊາຊົນໃນບາງບ້ານໄດ້ຂາຍສ່ວນຢາງ, ສະນັ້ນ, ຈຳນວນປະຊາຊົນທີ່ໄດ້ປາດຢາງພາລາຂອງຕົນເອງນັ້ນແມ່ນມີໜ້ອຍລົງ ແລະ ບໍ່ມີສະມາຊິກພຽງພໍທີ່ຈະສ້າງເປັນກຸ່ມສາຫະກອນຢາງພາລາໄດ້.
- ຄ່າໃຊ້ຈ່າຍສຳລັບການບໍລິຫານ ເປັນຂໍ້ຈຳກັດ ໃນການເຂົ້າຮ່ວມກຸ່ມສາຫະກອນຢາງພາລາຂອງປະຊາຊົນ: ການເຂົ້າຮ່ວມເປັນສະມາຊິກຂອງກຸ່ມສາຫະກອນຂາຍຢາງພາລາ ແມ່ນຈະຕ້ອງໄດ້ເສຍເງິນໃຫ້ແກ່ກຸ່ມສາຫະກອນເພື່ອນຳໃຊ້ເຂົ້າໃນການປະສານງານຂອງກຸ່ມສາຫະກອນ ແລະ ນຳໃຊ້ເຂົ້າໃນການຕໍ່ລອງກັບຜູ້ເກັບຊື້ຢາງພາລາເພື່ອໃຫ້ສະມາຊິກຂອງກຸ່ມສາຫະກອນສາມາດຂາຍຢາງພາລາໃນລາຄາທີ່ສູງຂຶ້ນ. ສະນັ້ນ, ປະຊາຊົນຢູ່ໃນບາງບ້ານທີ່ພວກເຮົາໄປເກັບຂໍ້ມູນເພື່ອເຮັດການຄົ້ນຄວ້າຄັ້ງນີ້ ໄດ້ອະທິບາຍວ່າປະຊາຊົນບໍ່ຢາກສ້າງກຸ່ມສາຫະກອນຢາງພາລາ ເພາະວ່າເຂົາເຈົ້າບໍ່ຢາກເສຍເງິນໃຫ້ແກ່ກຸ່ມສະຫະກອນຢາພາລາ.

**3. ຍັງບໍ່ທັນມີຂໍ້ມູນບົ່ງບອກຢ່າງຈະແຈ້ງກ່ຽວກັບ ສາຍເຫດຂອງການປ່ຽນແປງດ້ານລາຄາຢາງພາລາຢູ່ໃນພາກເໜືອຂອງສປປ.ລາວ. ແຕ່ຂໍ້ມູນທີ່ມີຢູ່ໃນປັດຈຸບັນສາມາດບົ່ງບອກໃຫ້ເຫັນວ່າລາຄາຢາງພາລາຕົກຕ່ຳແມ່ນບໍ່ພຽງແຕ່ຍ້ອນຄວາມຕ້ອງການຜົນຜະລິດຢາງພາລາໃນຕະຫຼາດໂລກຫຼຸດລົງ, ແຕ່ຍັງມີສາຍເຫດເນື່ອງມາຈາກການສວຍໂອກາດຂອງບັນດາບໍລິສັດຈີນ ທີ່ໄດ້ຮັບທຶນສະໜັບສະໜູນຈາກລັດຖະບານມາລົງທຶນປູກຢາງພາລາ ແລະ ເກັບຊື້ຜົນຜະລິດຢາງພາລາຢູ່ພາກເໜືອຂອງ ສປປ.ລາວ ບໍ່ປະຕິບັດຕາມລະບຽບການທີ່ມີຢູ່ຢ່າງເຂັ້ມງວດ.**

***ການຂາດຂໍ້ມູນດ້ານລາຄາ.*** ໃນຂະນະທີ່ລາຄາເກັບຊື້ຢາງພາລາໄດ້ຖືກປະກາດຢູ່ກະດານຂ່າວປະຈຳວັນຂອງໂຮງງານປຸງແຕ່ງຢາງພາລາຢູ່ພາກເໜືອຂອງ ສປປ.ລາວ ແລະ ອຳນາດການປົກຄອງແຂວງກໍມີສະຖິຕິລາຄາຢາງພາລາ (ສະເລ່ຍ) ປະຈຳປີ, ຂໍ້ມູນລາຍລະອຽດກ່ຽວກັບການເໜັງຕີງຂອງລາຄາຢາງພາລາ (ປະຈຳອາທິດຫຼືປະຈຳເດືອນ)

ແມ່ນບໍ່ສາມາດຊອກໄດ້ທັງຢູ່ໃນສປປ.ລາວ ແລະສປ.ຈີນ. ເຊິ່ງຖ້າຫາກມີຂໍ້ມູນທີ່ລະບຸລາຍລະອຽດກ່ຽວກັບການເໜັງຕີງຂອງລາຄາຢາງພາລາກໍຈະເປັນພື້ນຖານໃຫ້ແກ່ປະຊາຊົນແລະ ພາກສ່ວນທີ່ກ່ຽວຂ້ອງໃນລະດັບແຂວງສາມາດຕິດຕາມການເໜັງຕີງຂອງລາຄາຢາງພາລາໄດ້ດີ ແລະ ພ້ອມດຽວກັນນັ້ນກໍຈະສາມາດອຳນວຍຄວາມສະດວກໃຫ້ປະຊາຊົນສາມາດຂາຍຜົນຜະລິດຢາງພາລາໃນລາຄາທີ່ໂປ່ງໃສ ແລະ ຈະຊ່ວຍໃຫ້ອຳນາດການປົກຄອງຂັ້ນແຂວງສາມາດຕັດສິນໃຈໃນການວາງແຜນນະໂຍບາຍຂັ້ນແຂວງຢ່າງຖືກຕ້ອງຕໍ່ກັບບັນຫາຢາງພາລາ.

***ການສວຍໂອກາດ ແລະ ອຳນາດການຄວບຄຸມການຕະຫຼາດ.*** ເນື່ອງຈາກມີຄວາມຈຳກັດທາງດ້ານຂໍ້ມູນ, ພວກເຮົາສາມາດປຽບທຽບລາຄາຢາງພາລາຢູ່ສປປ.ລາວ ແລະ ສປ.ຈີນ ໄດ້ພຽງແຕ່ຫົກປີໃນລະຫວ່າງປີ 2003 ແລະ 2015 (ຮູບທີ່ 1, ຮູບສີ່ຫຼ່ຽມສີດຳ). ເຖິງແນວໃດກໍ່ຕາມ, ຜົນຂອງການສົມທຽບຂໍ້ມູນດັ່ງກ່າວໄດ້ຊີ້ໃຫ້ເຫັນເຖິງຄວາມແຕກຕ່າງລະຫວ່າງລາຄາຢາງພາລາທີ່ປະຊາຊົນຜູ້ປູກຢາງພາລາຢູ່ ສປປ.ລາວ ໄດ້ຮັບແມ່ນໜ້ອຍກວ່າປະມານເຄິ່ງໜຶ່ງຂອງລາຄາຢາງພາລາທີ່ຂາຍຢູ່ ສປ.ຈີນ. ສາຍເຫດສ່ວນໜຶ່ງແມ່ນຍ້ອນວ່າຜູ້ຊື້ຕ້ອງໄດ້ຈ່າຍຄ່າຂົນສົ່ງຢາງພາລາຈາກ ສປປ.ລາວ ໄປຍັງ ສປ. ຈີນ ແລະ ອີກສ່ວນໜຶ່ງກໍອາດຈະເປັນຍ້ອນຄຸນນະພາບຢາງພາລາໃນ ສປປ.ລາວ ແລະ ສປ.ຈີນ ບໍ່ຄືກັນ. ເຖິງວ່າໃນໄລຍະຜ່ານມາຄະນະກຳມະການຄຸ້ມຄອງຢາງພາລາຂັ້ນແຂວງໄດ້ອອກແຈ້ງການລາຄາຢາງພາລາໃຫ້ແກ່ປະຊາຊົນ, ແຕ່ຜູ້ທີ່ພວກເຮົາສຳພາດຫຼາຍທ່ານໄດ້ອະທິບາຍວ່າ ອຳນາດໃນການຜູກຂາດດ້ານການຕະຫຼາດພຽງຜູ້ດຽວຂອງ ສປ.ຈີນ ເປັນສ່ວນໜຶ່ງທີ່ເຮັດໃຫ້ລາຄາຢາງພາລາຢູ່ ສປປ. ລາວ ຕ່ຳກວ່າລາຄາຢາງພາລາທີ່ຂາຍຢູ່ ສປ.ຈີນ

***ການປະຕິບັດລະບຽບບໍ່ເຂັ້ມງວດ.*** ມີພຽງບໍລິສັດຂອງຈີນຈຳນວນໜຶ່ງເທົ່ານັ້ນທີ່ໄດ້ຮັບໂກຕານຳເຂົ້າຢາງພາລາຈາກ ສປປ.ລາວ ເຂົ້າໄປຍັງ ສປ.ຈີນ. ເຖິງວ່າບັນດາບໍລິສັດຂອງຈີນທີ່ໄດ້ຮັບໂກຕານຳເຂົ້າຢາງພາລາຈາກ ສປປ.ລາວ ເຂົ້າໄປ ສປ.ຈີນ ເຫຼົ່ານີ້ຈະໄດ້ຮັບການສະໜັບສະໜູນທາງດ້ານການເງິນຈາກລັດຖະບານ ສປ.ຈີນ ເພື່ອລົງທຶນປູກຢາງພາລາໃນ ສປປ.ລາວ ເລີ່ມຕັ້ງແຕ່ຕົ້ນປີ 2004 ກໍຕາມ, ສັນຍາການສົ່ງເສີມປູກຢາງພາລາໃນຮູບແບບ “2+3” ແລະ “1+4” ໄດ້ຊີ້ບອກໃຫ້ເຫັນວ່າ ບັນດາບໍລິສັດເຫຼົ່ານີ້ບໍ່ໄດ້ປະຕິບັດຕາມຈຸດປະສົງໃນການຊ່ວຍເຫຼືອປະຊາຊົນຢູ່ພາກເໜືອຂອງ ສປປ.ລາວ ໂດຍການສົ່ງເສີມການປູກຢາງພາລາເພື່ອທົດແທນການປູກຝິ່ນ. ສາຍເຫດທີ່ບໍລິສັດຜູ້ລົງທຶນຂອງ ສປ.ຈີນ ບໍ່ໄດ້ເຮັດຕາມຈຸດປະສົງຂອງການສະໜັບສະໜູນທາງດ້ານການເງິນຈາກລັດຖະບານສປ.ຈີນ ນັ້ນສ່ວນໜຶ່ງແມ່ນຍ້ອນວ່າການລົງທຶນຂອງນັກລົງທຶນຈາກ ສປ.ຈີນ ແມ່ນຢູ່ພາຍໃຕ້ການຄຸ້ມຄອງຢູ່ໃນລະດັບແຂວງ ເຊິ່ງເຮັດໃຫ້ນັກລົງທຶນຈາກ ສປ.ຈີນ ມີອຳນາດໃນການຕໍ່ລອງການລົງທຶນ ຕາມທີ່ເຂົາເຈົ້າຕ້ອງການຫຼາຍກວ່າ ການລົງທຶນຂອງນັກລົງທຶນຕ່າງປະເທດທີ່ມີການຄຸ້ມຄອງໃນລະດັບສູນກາງ.

ຮູບທີ 1: ລາຄາຢາງພາລາຢູ່ພາກເໜືອຂອງ ສປປ.ລາວ ສົມທຽບກັບ ລາຄາຢາງພາລາ ຢູ່ ສິບສອງພັນນາ, ແຂວງຢູນານ, ສປ.ຈີນ




ແຫຼ່ງຂໍ້ມູນ: ຈາກການສຳພາດ (ສຳລັບຂໍ້ມູນຢູ່ ສປປ.ລາວ) ແລະ ຂໍ້ມູນມືສອງ ແລະ ຂໍ້ມູນຈາກອິນເຕີເນັດ (ສຳລັບຂໍ້ມູນຢູ່ ສປ. ຈີນ). ລາຍລະອຽດກະລຸນນາເບິ່ງຕາມບົດລາຍງານໃຫຍ່.

## ຂໍ້ສະເໜີແນະ

1. **ລົງທຶນໃສ່ລະບຽບການ ແລະ ນະໂຍບາຍເພື່ອສະໜັບສະໜູນໃຫ້ປະຊາຊົນປູກພືດຍຸດທະສາດ.** ບັນດາປະເທດທີ່ປະສົບຜົນສຳເລັດໃນການປູກຢາງພາລາ ໂດຍປະຊາຊົນແມ່ນບໍ່ພຽງແຕ່ໄດ້ມີ ການລົງທຶນໃນການສົ່ງເສີມດ້ານເຕັກນິກວິຊາການເທົ່ານັ້ນ, ແຕ່ຍັງຕ້ອງໄດ້ໃຫ້ການຊ່ວຍເຫຼືອໃນການຄ້ຳປະກັນດ້ານລາຄາໂດຍສະເພາະແມ່ນໃນຊ່ວງເວລາທີ່ຄວາມຕ້ອງການຂອງໂລກຫຼຸດລົງ. ຍິ່ງໄປກວ່ານັ້ນ, ເມື່ອບໍລິສັດເຂົ້າມາມີສ່ວນຮ່ວມໃນການຊ່ວຍນຳເອົາຜົນຜະລິດກະສິກຳທີ່ປະຊາຊົນຜະລິດໄດ້ເຂົ້າໄປສູ່ຕະຫຼາດ, ໃນຄະນະດຽວກັນຄວນມີການຄຸ້ມຄອງໂດຍລະບຽບການ ເພື່ອເຮັດໃຫ້ການຄ້າຂາຍຜົນຜະລິດກະສິກຳຂອງປະຊາຊົນມີຄວາມຍຸດຕິທຳ ແລະ ເພື່ອໃຫ້ເກີດຜົນປະໂຫຍດສູງສຸດໃຫ້ແກ່ປະຊາຊົນ ແລະ ຫຼີກລ່ຽງການສວຍໂອກາດຂອງບໍລິສັດຜູ້ລົງທຶນ. ໂດຍສະເພາະແມ່ນມີຫຼາຍບໍລິສັດໃນ ສປປ.ລາວ ໄດ້ຮັບການສຳປະທານຜູກຂາດໃນພື້ນທີ່ສະ

ເພາະໃດໜຶ່ງແມ່ນຍິ່ງມີຄວາມຈຳເປັນທີ່ລັດຈະຕ້ອງໄດ້ລົງທຶນເພື່ອສ້າງລະບຽບໃຫ້ຫັດກກຸມ ແລະ ມີການຈັດຕັ້ງປະຕິບັດລະບຽບຢ່າງເຂັ້ມງວດ.

2. ຄວາມເປັນໄປໄດ້ສຳລັບການຮ່ວມມືໃນການຈັດຕັ້ງປະຕິບັດລະບຽບລະຫວ່າງປະເທດ. ລັດຖະບານ ສປປ. ລາວ ແລະ ສປ.ຈີນ ມີຄວາມສົນໃຈຢາກໃຫ້ບໍລິສັດລົງທຶນຂອງ ສປ.ຈີນ ທີ່ມາລົງທຶນປູກຢາງພາລາໃນສປປ.ລາວ ເຮັດສັນຍາສົ່ງເສີມປະຊາຊົນ ໂດຍອີງຕາມແຜນງານການປູກພືດທົດແທນການປູກຝິ່ນຂອງລັດຖະບານ ສປ.ຈີນ. ໃນປັດຈຸບັນນີ້ທາງນະຄອນຫຼວງປັກກິ່ງຂອງ ສປ.ຈີນ ກຳລັງພັດທະນາ ຄູ່ມືໃນການລົງທຶນໃຫ້ແກ່ບໍລິສັດຈີນ ທີ່ລົງທຶນຢູ່ຕ່າງປະເທດ (ລວມທັງການລົງທຶນໃນຂະແໜງການຢາງພາລາ), ເຊິ່ງຄວາມພະຍາຍາມດັ່ງກ່າວແມ່ນໄດ້ເປີດໂອກາດໃຫ້ມີການຮ່ວມມືໃນການສ້າງລະບຽບໃຫ້ຫັດກຸມແລະ ຈັດຕັ້ງປະຕິບັດລະບຽບທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

3. **ສະໜັບສະໜູນຄວາມພະຍາຍາມຂອງປະຊາຊົນໃນສ້າງລະບຽບການນຳໃຊ້ທີ່ດິນເພື່ອເພີ່ມຄວາມໝັ້ນຄົງໃນການຖືຄອງທີ່ດິນໃຫ້ແກ່ຊຸມຊົນ.** ຄວາມສາມາດໃນການຄຸ້ມຄອງທີ່ດິນຂອງປະຊາຊົນ ເປັນສິ່ງສຳຄັນທີ່ເຮັດໃຫ້ປະຊາຊົນບ້ານຫາດຍາວມີຜົນສຳເລັດໃນການປູກຢາງພາລາ, ແຕ່ຜົນສຳເລັດດັ່ງກ່າວບໍ່ພຽງແຕ່ຍ້ອນການເຄົາລົບລະບຽບການ ແລະ ປະເພນີຢ່າງເຂັ້ມງວດຂອງປະຊາຊົນ, ແຕ່ຫາກຍ້ອນການຊ່ວຍເຫຼືອ ແລະ ສະໜັບສະໜູນຈາກພາຍນອກ. ທຸກມື້ນີ້, ການແກ້ໄຂບັນຫາກ່ຽວກັບທີ່ດິນເປັນລາຍບຸກຄົນໄດ້ຂະຫຍາຍຕົວນັບມື້ເພີ່ມຂຶ້ນ – ເຊັ່ນການເຊົ່າທີ່ດິນເພື່ອປູກກ້ວຍ – ຄວາມສາມາດຂອງປະຊາຊົນໃນການຄຸ້ມຄອງທີ່ດິນແມ່ນມີຄວາມສຳຄັນຕໍ່ກັບການປ່ຽນແປງການນຳໃຊ້ທີ່ດິນໃນເຂດທີ່ເຂົາເຈົ້າຄຸ້ມຄອງ. ການບໍລິຫານຄຸ້ມຄອງທີ່ອີງໃສ່ປະເພນີການບໍລິຫານແບບດັ້ງເດີມຂອງຄົນທ້ອງຖິ່ນ ແລະ ຄວາມເຂົ້າໃຈຂອງປະຊາຊົນ ຕໍ່ກັບວຽກງານການວາງແຜນການນຳໃຊ້ທີ່ດິນ ແມ່ນເປັນສ່ວນໜຶ່ງທີ່ສຳຄັນ ທີ່ເຮັດໃຫ້ປະຊາຊົນບ້ານຫາດຍາວມີຜົນສຳເລັດໃນການປູກຢາງພາລາ ເຊິ່ງປະຊາຊົນໄດ້ຮັບຜົນປະໂຫຍດດ້ານການຖືຄອງທີ່ດິນ ແລະ ບົດຮຽນດັ່ງກ່າວແມ່ນຄວນຈະຖືກຜັນຂະຫຍາຍໄປຈັດຕັ້ງປະຕິບັດຢູ່ໃນບ້ານອື່ນໆ ຢ່າງກວ້າງຂວາງ.

4. **ຄວາມຮູ້ໃນສະຖານບັນ ແລະ ການບໍລິຫານຄຸ້ມຄອງຂໍ້ມູນ.** ໃນຊ່ວງເວລາດຳເນີນການເຮັດຄົ້ນຄວ້າດັ່ງກ່າວນີ້, ທີມງານຄົ້ນຄວ້າຂອງພວກເຮົາໄດ້ຄາດຫວັງວ່າຢ່າງໜ້ອຍຕ້ອງເກັບຂໍ້ມູນໃນ 3 ປະເດັນທີ່ສຳຄັນທີ່ພວກເຮົາຕ້ອງການຢາກໄດ້, ແຕ່ໃນທີ່ສຸດພວກເຮົາກໍບໍ່ສາມາດເຂົ້າຫາບັນດາຂໍ້ມູນດັ່ງກ່າວໄດ້ເຊັ່ນ ຂໍ້ມູນກ່ຽວກັບ ໜັງສືສັນຍາກັບບໍລິສັດ ລົງທຶນປູກຢາງພາລາແມ່ນບໍ່ໄດ້ເກັບໄວ້ ເປັນຟາຍ (File) ໃນຄອມພິວເຕີ, ບໍ່ມີຂໍ້ມູນດ້ານລາຄາຢາງພາລາ ແລະ ມີຂໍ້ມູນສະຖິຕິການປູກຢາງພາລາໃນແຕ່ລະຮູບແບບການລົງທຶນທີ່ເປັນເປັນຂໍ້ມູນເກົ່າ ເຊິ່ງຍັງບໍ່ທັນໄດ້ຮັບການປັບປຸງໃຫ້ຖືກຕ້ອງກັບຂໍ້ມູນຕົວຈິງໃນປັດຈຸບັນ. ເຊິ່ງໃນບາງກໍລະນີ, ຂໍ້ມູນຕ່າງໆເຫຼົ່ານີ້ອາດຈະມີຢູ່ນຳບັນດາບໍລິສັດຜູ້ລົງທຶນ, ແຕ່ສິ່ງທີ່ພວກເຮົາຄົ້ນພົບກໍໄດ້ຊີ້ບອກໃຫ້ເຫັນວ່າຈະຕ້ອງໄດ້ມີການສືບຕໍ່ເກັບກຳຂໍ້ມູນໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງໃນທຸກລະດັບ ເພື່ອໃຫ້ທຸກລະດັບໄດ້ມີຂໍ້ມູອັນດຽວກັນເພື່ອຮັບປະກັນຄວາມໂປ່ງໃສໃຫ້ແກ່ການປູກຢາງພາລາໃນພາກເໜືອຂອງ ສປປ.ລາວ.

ການຂຽນບົດຄວາມຫຍໍ້ນີ້ໄດ້ຮັບທຶນສະໜັບສະໜູນໂດຍໂຄງການຄຸ້ມຄອງທີ່ດິນໃນພາກພື້ນແມ່ນ້ຳຂອງ (MRLG). ຂຽນໂດຍ ທ່ານ ປອ. Michael Dwyer ແລະ ທ່ານ ນ. Naomi Basik Treanor ແລະ ໄດ້ຜ່ານການກວດແກ້ ໂດຍທ່ານ Kirstin Canby.

ຜູ້ຂຽນຂໍສະແດງຄວາມຂອບໃຈມາຍັງ ທ່ານ Christian Castellanet ແລະ ທ່ານ ນ. Latalia Scurrah ເຊິ່ງເປັນພະນັກງານຂອງ ໂຄງການຄຸ້ມຄອງທີ່ດິນໃນພາກພື້ນແມ່ນ້ຳຂອງ (MRLG) ທີ່ໄດ້ປະກອບຄຳຄິດເຫັນໃນການປັບປຸງຊິດຄວາມຫຍໍ້ສະບັບນີ້, ແລະ ກໍຂໍຂອບໃຈ ມາຍັງ ທ່ານ ນ. Linna Scott ເຊິ່ງເປັນພະນັກງານຂອງ ຟໍເຣສ ເທຣນ (Forest Trrend) ທີ່ໄດ້ຊ່ວຍໃນການຈັດຮູບແບບເອກະສານບົດຄວາມຫຍໍ້ນີ້. ຄຳຂອບໃຈທັງໝົດນີ້ແມ່ນສາມາດອ່ານໄດ້ໃນບົດລາຍງານຂອງໂຄງການຄົ້ນຄວ້ານີ້

**ໂຄງການຄຸ້ມຄອງທີ່ດິນໃນພາກພື້ນແມ່ນ້ຳຂອງ (MRLG) ແມ່ນໄດ້ຮັບ**ທຶນສະໜັບສະໜູນຈາກອົງການສະວິດເພື່ອການຮ່ວມມືພັດທະນາ (SDC), ກະຊວງການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາຂອງລັດຖະບານ ເຢຍລະມັນ **(BMZ)** ແລະ ປະເທດ ລຸກຊຳບວກ.

5. **ໃນອະນາຄົດຄວນໃຫ້ການສະໜັບສະໜູນການຄົ້ນຄວ້າເພີ່ມຕື່ມ ໂດຍອີງຕາມຜົນຂອງການຄົ້ນຄວ້າໃນຄັ້ງນີ້.** ເຊິ່ງຜົນຂອງການຄົ້ນຄວ້າຄັ້ງນີ້ໄດ້ຊີ້ໃຫ້ເຫັນວ່າ ຍັງມີຫຼາຍປະເດັ່ນທີ່ຍັງຈະຕ້ອງໄດ້ສືບຕໍ່ເຮັດການຄົ້ນຄວ້າ ໃນອະນາຄົດ, ໃນນັ້ນລວມມີດັ່ງນີ້:

- ***ສະໜັບສະໜູນໃຫ້ປະຊາຊົນເຮັດສັນຍາກັບນັກລົງທຶນຢ່າງຫັດກຸມ ແລະ ປະຕິບັດສັນຍາຢ່າງເຂັ້ມງວດ***: ຈະເຮັດແນວໃດຈິ່ງຈະສາມາດປະຕິບັດກົດໝາຍ, ກົດລະບຽບ ແລະ ສັນຍາທີ່ມີຢູ່ໃຫ້ດີຂຶ້ນເພື່ອຊ່ວຍເຫຼືອປະຊາຊົນ? ສັນຍາທີ່ມີແລ້ວແຕ່ ຍັງບໍ່ທັນຫັດກຸມ, ຈະສາມາດນຳມາເຈລະຈາແລະ ປັບປຸງຄືນເພື່ອເປັນການຊ່ວຍເຫຼືອປະຊົນໄດ້ບໍ?
- ***ຄອບຄົວທີ່ໄດ້ຮັບຜົນກະທົບຈາກລາຄາຢາງພາລາຕົກຕ່ຳ***: ເນື່ອງຈາກວ່າລາຄາຢາງພາລາຕົກຕ່ຳເຮັດໃຫ້ປະຊາຊົນຜູ້ປູກຢາງພາລາໄດ້ປາດຢາງພາລາໂດຍອາໄສສະເພາະແຕ່ແຮງງານ ທີ່ມີຢູ່ພາຍໃນຄອບຄົວຂອງຕົນເອງ, ບັນຫາດັ່ງກ່າວນີ້ ມີຜົນກະທົບແນວໃດ ຕໍ່ລະດັບຄອບຄົວຂອງປະຊາຊົນ ແລະ ລະດັບນ້ອຍກວ່າ (ຕົວຢ່າງຜົນກະທົບຕໍ່ການແບ່ງງານລະຫວ່າງສະມາຊິກພາຍໃນຄອບຄົວ)?
- ***ການເປັນໜີ້ສິນ***: ການເປັນໜີ້ສິນເນື່ອງຈາກລາຄາຢາງພາລາຕົກຕ່ຳ ເປັນປັດໃຈທີ່ເຮັດໃຫ້ມີການຫັນປ່ຽນການນຳໃຊ້ທີ່ດິນ (ຕົວຢ່າງ ການເຊົ່າທີ່ດິນປູກກ້ວຍ) ໃນຊ່ວງຊຸມປີທີ່ຜ່ານມາບໍ?
- ***ຄວາມສົນໃຈທີ່ແຕກຕ່າງກັນພາຍໃນຂະແໜງການທຸລະກິດກະສິກຳຈີນ***: ບໍລິສັດຈີນໄດ້ໃຫ້ຄວາມສົນໃຈໃນການລົງທຶນປູກຢາງພາລາ ແລະ ເຮັດທຸລະກິດໃນຂະແໜງການໃດແດ່? ບໍລິສັດໃດແດ່ມີຄວາມມຸ່ງໝັ້ນໃນການພັດທະນາຂະແໜງການໃດໜຶ່ງໃນໄລຍະຍາວ (ຕົວຢ່າງ ການລົງທຶນປູກຢາງພາລາ) ແລະ ມີບໍລິສັດໃດແດ່ທີ່ຊອກຫາໂອກາດເພື່ອເຮັດທຸລະກິດໄລຍະສັ້ນ? ຈະເຮັດແນວໃດຈິ່ງ ຈະສາມາດສ້າງໂອກາດແນວໃດໃຫ້ອຳນາດການປົກຄອງໃນ ສປປ.ລາວ ແລະ ສປ.ຈີນ ສາມາດຮ່ວມມືກັນໃນການຄຸ້ມຄອງນັກລົງທຶນຂອງນັກລົງທຶນຈາກ ສປ.ຈີນ ເພື່ອເຮັດໃຫ້ການລົງທຶນທີ່ມີຜົນປະໂຫຍດຮ່ວມກັນ ເພື່ອການພັດທະນາເສດຖະກິດຂອງປະຊາຊົນຢູ່ທາງພາກເໜືອຂອງສປປ.ລາວ ໃຫ້ມີຄວາມຍືນຍົງ.

## ລາຍລະອຽດຂອງຂໍ້ມູນແມ່ນສາມາດຊອກຫາໄດ້

- **ບົດຄວາມທາງວິທະຍາສາດ:** http://mrlg.org/resources/after-the-boom-responding-to-falling- rubber-prices-in-northern-laos/
- **ບົດລາຍງານໂຄງການ:** http://publications.mrlg.org/wp- content/uploads/2016/03/Multi-Scalar-Evidenced-Based-Dialogue-A-Regional- Approach-to-Improving-Small-Holder-Land-Tenure-final.pdf

## ສາມາດຕິດຕໍ່ຫາຜູ້ຂຽນຕາມຂໍ້ມູນຂ້າງລຸ່ມນີ້:


- ທ່ານ ປອ. Michael Dwyer, ນັກຄົ້ນຄວ້າ ຈາກສູນສຳລັບການພັດທະນາ ແລະ ສິ່ງແວດລ້ອມ, ມະຫາວິທະຍາໄລເບີນ: dwyerdwyer@gmail.com
- ທ່ານ ນ. Naomi Basik Treanor, ນັກບໍລິຫານວຽກງານປ່າໄມ້, ນະໂຍ ບາຍ, ການຄ້າ ແລະ ການເງິນ, ຂອງ ຟໍເຣດ ເທຣນ (Forest Trends): nbasik@forest-trends.org